**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ຫ້ອງວ່າການແຂວງ

ເລກທີ..979../ຫວຂ.ບກ

ບໍ່ແກ້ວ, ວັນທີ..20.ຕຸລາ.2020.

# ໜັງສືທາງລັດຖະການ

**ຮຽນ:** - ທ່ານຫົວໜ້າຫ້ອງວ່າການແຂວງສະຫວັນນະເຂດ ທີ່ນັບຖືຢ່າງສູງ.
- ຫົວໜ້າຫ້ອງວ່າການແຂວງບໍລິຄຳໄຊ ທີ່ນັບຖືຢ່າງສູງ.
- ຫົວໜ້າຫ້ອງວ່າການແຂວງວຽງຈັນ ທີ່ນັບຖືຢ່າງສູງ.
- ຫົວໜ້າຫ້ອງວ່າການແຂວງຊຽງຂວາງ ທີ່ນັບຖືຢ່າງສູງ.
- ຫົວໜ້າຫ້ອງວ່າການແຂວງຫຼວງພະບາງ ທີ່ນັບຖືຢ່າງສູງ.
- ທ່ານ ຫົວໜ້າ ຫ້ອງວ່າການແຂວງໄຊຍະບູລີ ທີ່ນັບຖືຢ່າງສູງ.

**ເລື່ອງ:** ການໂຈະ ກິດຈະການເດີນເຮືອຂົນສົ່ງສິນຄ້າຜ່ານຈຸດດ່ານສາກົນບ້ານມອມ ເປັນການຊົ່ວຄາວ.

- **ອີງຕາມ** ແຈ້ງການ ສະບັບເລກທີ 1049/ຫສນຍ, ລົງວັນທີ 1 ຕຸລາ 2020 ວ່າດ້ວຍມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19.
- **ອີງຕາມ** ສະພາບການລະບາດຂອງພະຍາດໂຄວິດ-19 ຢູ່ບັນປະເທດໃກ້ຄຽງ (ມຽນມາ) ນັບມື້ເພີ່ມຂຶ້ນ.
- **ອີງຕາມ** ການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງເຫັນດີເປັນເອກະພາບ ໃນກອງປະຊຸມຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແຂວງບໍ່ແກ້ວ ຄັ້ງວັນທີ 16 ຕຸລາ 2020.

ຫ້ອງວ່າການແຂວງບໍ່ແກ້ວ ຂໍຖືເປັນກຽດປະສານງານ ແລະ ແຈ້ງມາຍັງບັນດາທ່ານຫົວໜ້າຫ້ອງວ່າການແຂວງທີ່ພົວພັນ ຮັບຊາບວ່າ: ແຂວງບໍ່ແກ້ວໄດ້ປະເມີນຄືນສະພາບການລະບາດ ຂອງພະຍາດໂຄວິດ-19 ໃນໄລຍະໂຈະກິດ ຈະການເດີນເຮືອຂົນສົ່ງສິນຄ້າຜ່ານ ຢູ່ຈຸດດ່ານສາກົນບ້ານມອມ, ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວເປັນການຊົ່ວຄາວ ແຕ່ວັນທີ 28 ກັນຍາ ເຖິງ 15 ຕຸລາ 2020 ນັ້ນ, ເຫັນໄດ້ວ່າ ແຂວງບໍ່ແກ້ວ ຍັງມີຄວາມສ່ຽງຈະຕິດເຊື້ອພະຍາດດັ່ງກ່າວສູງຂຶ້ນເລື້ອຍໆ. ສະນັ້ນ ຈຶ່ງຂໍປະສານມາຍັງຫ້ອງວ່າການບັນດາແຂວງ ເພື່ອແຈ້ງຕໍ່ຂະແໜງການກ່ຽວຂ້ອງແຂວງ, ນັກ ທຸລະກິດ, ຕົວແທນຜູ້ດຳເນີນການແຈ້ງເສຍພາສີ (ຊິບປິງ) ແລະ ຜູ້ປະກອບການຂົນສົ່ງສິນຄ້າຜ່ານແດນຈາກດ່ານຕ່າງໆຢູ່ບັນດາແຂວງ ຈະມາຍັງແຂວງບໍ່ແກ້ວ ທີ່ມີຈຸດປະສົງ ສົ່ງອອກສິນຄ້າຢູ່ຈຸດດ່ານສາກົນບ້ານມອມ, ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວໃຫ້ຮັບຊາບທົ່ວເຖິງກັນ. ສ່ວນເວລາທີ່ຈະອະນຸຍາດເປີດໃຫ້ດຳເນີນກິດຈະການເດີນເຮືອຄືນນັ້ນ ແມ່ນຈະລໍຖ້າທິດຊີ້ນຳຈາກຄະນະສະເພາະກິດຂັ້ນສູນກາງ.

ດັ່ງນັ້ນ, ຈຶ່ງປະສານງານມາຍັງທ່ານ ເພື່ອຊ່ວຍຄົ້ນຄວ້າ, ພິຈາລະນາ ຕາມເຫັນຄວນ.

ດ້ວຍຄວາມນັບຖື!

**ຫົວໜ້າຫ້ອງວ່າການແຂວງ**

ຫ້ອງວ່າການ ແຂວງ

ບຸນທອງ ແສງສີກອງ

BOUNTHONG SENGSIKONG

+ເບີໂທປະສານ: 084 211 066